# ລົງທະບຽນໃນຊ່ວງເວລາ ການລົງທະບຽນທີ່ພິເສດ

ການຄຸ້ມຄອງເມື່ອທ່ານຕ້ອງການມັນ.



## ຊ່ວງເວລາການລົງທະບຽນທີ່ພິເສດແມ່ນຫຍັງ?

ບາງສະຖານະການ ແລະ ເຫດການຊີວິດເຮັດໃຫ້ທ່ານສາມາດລົງທະບຽນສໍາລັບການຄຸ້ມຄອງສຸຂະພາບ ແລະ ທັນຕະແພດທີ່ຢູ່ນອກຊ່ວງເວລາການລົງທະບຽນເປີດປະຈໍາປີ. ສິ່ງນີ້ແມ່ນເອີ້ນວ່າຊ່ວງເວລາການລົງທະບຽນທີ່ພິເສດ.

## ຂ້າພະເຈົ້າຈະລົງທະບຽນໄດ້ແນວໃດ?

ທ່ານສາມາດສະໝັກສໍາລັບຊ່ວງເວລາການລົງທະບຽນທີ່ພິເສດໂດຍສ່ວນໃຫຍ່ຜ່ານ *Washington Healthplanfinder* ຫຼື ຢູ່ແອັບ WAPlanfinder. ທ່ານຕ້ອງສະໝັກພາຍໃນ 60 ມື້ຫຼັງຈາກທີ່ມີການປ່ຽນແປງໃນສະຖານະການ. ໃນບາງກໍລະນີ, ທ່ານສາມາດສະໝັກ 60 ມື້ລ່ວງໜ້າ.

## ເຫດການຊີວິດທີ່ເຂົ້າເກນເງື່ອນໄຂ

ເຫດການຊີວິດດັ່ງຕໍ່ໄປນີ້ອາດເຮັດໃຫ້ທ່ານເຂົ້າເກນເງື່ອນໄຂສໍາລັບຊ່ວງເວລາການລົງທະບຽນທີ່ພິເສດ. ລາຍການນີ້ບໍ່ລວມເຫດການທີ່ເຂົ້າເກນເງື່ອນໄຂທັງໝົດ, ກະລຸນາຕິດຕໍ່ພວກເຮົາທີ່ 1-855-923-4633 ຖ້າມີຄໍາຖາມໃດໆ.

| ເຫດການຊີວິດທີ່ເຂົ້າເກນເງື່ອນໄຂ | ອອນລາຍ | ຕິດຕໍ່ພວກເຮົາ |
|---|---|---|
| ການສູນເສຍການຄຸ້ມຄອງສຸຂະພາບປະເພດອື່ນໆ [ການເສຍວຽກ, ການຢ່າຮ້າງ, ການສູນເສຍ Washington Apple Health (Medicaid) ຫຼື WSHIP] | ✓ | |
| ການແຕ່ງດອງ ຫຼື ການເຂົ້າຮ່ວມຄວາມສໍາພັນແບບຢູ່ຮ່ວມກັນ | ✓ | |
| ການເກີດ, ການຮັບລູກລ້ຽງ ຫຼື ການປ່ຽນແປງໃນການດູແລອຸປະຖໍາ | ✓ | |
| Cascade Care Savings (ລາຍໄດ້ຄົວເຮືອນຢູ່ທີ່ ຫຼື ຕໍ່າກວ່າ 250% ຂອງ FPL) | ✓ | |
| ການຍ້າຍໄປຢູ່ລັດວໍຊິງຕັນ ຫຼື ເຂດປົກຄອງໃໝ່ໃນລັດວໍຊິງຕັນ | ✓ | |
| ການປ່ຽນແປງໃນລາຍໄດ້ | ✓ | |
| ການເປັນສະມາຊິກຊົນເຜົ່າ | ✓ | |
| ການປ່ຽນແປງໃນສັນຊາດ ຫຼື ສະຖານະການຢູ່ອາໄສທີ່ຖືກຕ້ອງຕາມກົດໝາຍ | ✓ | |
| ການອອກຈາກບ່ອນກັກຂັງ ຫຼື ຄຸກ | ✓ | |
| ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ/ການໃຊ້ຄວາມຮຸນແຮງ/ການປະຖິ້ມຜົວເມຍ | ✓ | |
| ການປ່ຽນແປງໃນການຄຸ້ມຄອງ COBRA | ✓ | |
| ການໄດ້ຮັບຄໍາສັ່ງສານ (ລວມເຖິງການຊ່ວຍເຫຼືອເດັກ) | ✓ | |
| ອາຍຸເຂົ້າ 26 ປີ ແລະ ການມີອາຍຸສູງກວ່າແຜນປະກັນຂອງພໍ່ແມ່ | ✓ | |
| ແກ້ໄຂຄໍາຮ້ອງຂໍຢັ້ງຢືນເອກະສານຫຼັງຈາກທີ່ຖືກປະຕິເສດກ່ອນໜ້ານີ້ | | ✓ |
| ຂໍ້ຜິດພາດ *Washington Healthplanfinder* | | ✓ |

| ເຫດການຊີວິດທີ່ເຂົ້າເກນເງື່ອນໄຂ | ອອນລາຍ | ຕິດຕໍ່ພວກເຮົາ |
|---|---|---|
| ການເຂົ້າເຖິງ Individual Coverage Health Reimbursement Arrangement (ICHRA) ຫຼື ຫາກໍໄດ້ຮັບ Qualified Small Employer Health Reimbursement Arrangement (QSEHRA) ຜ່ານນາຍຈ້າງຂອງທ່ານ | | ✓ |
| ຫາກໍມີສິດສໍາລັບເຄຣດິດອາກອນ ຫຼື ເງິນອຸດໜູນຮ່ວມຈ່າຍຕົ້ນທຶນສໍາລັບການລົງທະບຽນ:<br>• ສ່ວນຫຼຸດໃນລາຍໄດ້<br>• ບໍ່ສາມາດຈ່າຍການຄຸ້ມຄອງສຸຂະພາບທີ່ສະໜັບສະໜູນໂດຍນາຍຈ້າງອີກຕໍ່ໄປ<br>• ການປະກອບສ່ວນຂອງອະດີດນາຍຈ້າງຕໍ່ເບ້ຍປະກັນ COBRA ສິ້ນສຸດລົງ<br>ບໍ່ສາມາດຈ່າຍການຄຸ້ມຄອງສຸຂະພາບທີ່ຊື້ເປັນລາຍບຸກຄົນຢູ່ນອກ *Washington Healthplanfinder* ອີກຕໍ່ໄປ | | ✓ |
| ຜູ້ໃຫ້ບໍລິການແຜນປະກັນສຸຂະພາບລະເມີດສັນຍາ | | ✓ |
| ສະຖານະການຍົກເວັ້ນພິເສດ | | ✓ |

## ຊ່ວງເວລາການລົງທະບຽນທີ່ພິເສດ Cascade Care Savings

ບາງຄົວເຮືອນສາມາດສະໝັກສໍາລັບການລົງທະບຽນທີ່ພິເສດໄດ້ຕະຫຼອດເວລາ. ທ່ານບໍ່ຈໍາເປັນຕ້ອງໃຫ້ເກີດເຫດການຊີວິດທີ່ເຂົ້າເກນເງື່ອນໄຂ. ລາຍໄດ້ຄົວເຮືອນຂອງທ່ານຕ້ອງຢູ່ທີ່ ຫຼື ຕໍ່າກວ່າ 250% ຂອງ FPL.

ຕົວຢ່າງ: ຄົວເຮືອນເຫຼົ່ານີ້ຈະເຂົ້າເກນເງື່ອນໄຂ:

- ຄົວເຮືອນທີ່ມີໜຶ່ງຄົນທີ່ມີລາຍໄດ້ສູງເຖິງ $33,975 ຕໍ່ປີ
- ຄົວເຮືອນທີ່ມີສາມຄົນທີ່ມີລາຍໄດ້ສູງເຖິງ $57,575 ຕໍ່ປີ

ຕິດຕໍ່ພວກເຮົາຖ້າທ່ານບໍ່ຮູ້ວ່າທ່ານເຂົ້າເກນເງື່ອນໄຂ ຫຼື ບໍ່.

## ຄົນອິນເດຍອາເມຣິກາ ແລະ ຄົນພື້ນເມືອງອາລັດສະກາ

ຄົນອິດເດຍອາເມຣິກາ ແລະ ຄົນພື້ນເມືອງອາລັດສະກາສາມາດລົງທະບຽນສໍາລັບແຜນປະກັນສຸຂະພາບໄດ້ຕະຫຼອດເວລາໃນປີ. ທ່ານຍັງສາມາດປ່ຽນແຜນປະກັນຂອງທ່ານໄດ້ໜຶ່ງຄັ້ງຕໍ່ເດືອນ. ທ່ານຕ້ອງລົງທະບຽນເປັນສະມາຊິກຊົນເຜົ່າ ຫຼື ຜູ້ມີສ່ວນຮ່ວມໃນບໍລິສັດຄົນພື້ນເມືອງອາລັດສະກາເພື່ອໄດ້ຮັບສິດທິປະໂຫຍດເຫຼົ່ານີ້.

## ວັນທີເລີ່ມການຄຸ້ມຄອງ

ໂດຍປົກກະຕິແລ້ວ, ການຄຸ້ມຄອງຂອງທ່ານຈະເລີ່ມຕົ້ນໃນມື້ທໍາອິດຂອງເດືອນຫຼັງຈາກທີ່ທ່ານສະໝັກ. ການຄຸ້ມຄອງສາມາດເລີ່ມໃນພາຍຫຼັງ ຖ້າທ່ານລາຍງານການຄຸ້ມຄອງທີ່ສິ້ນສຸດໃນວັນທີອະນາຄົດ. ບາງເຫດການ ເຊັ່ນ: ການເກີດ ຈະໃຫ້ການຄຸ້ມຄອງຍ້ອນຫຼັງໂດຍອັດຕະໂນມັດ. ຫຼັງຈາກເຫດການທີ່ເຂົ້າເກນເງື່ອນໄຂ, ທ່ານມີເວລາ 60 ມື້ທີ່ຈະເລືອກແຜນປະກັນ.

## ເອກະສານທີ່ຈໍາເປັນ

ບໍລິສັດປະກັນຂອງທ່ານອາດຮ້ອງຂໍເອກະສານຕ່າງໆເພື່ອຢືນຢັນການປ່ຽນແປງທີ່ທ່ານລາຍງານ.

### ໂດຍໂທລະສັບ

ໂທຫາພວກເຮົາທີ່ 1-855-923-4633
TTY/TDD: 1-855-627-9604

### ອອນລາຍ

wahealthplanfinder.org ຫຼື ດາວໂຫຼດແອັບ WAPlanfinder.

### ການຊ່ວຍເຫຼືອໃນທ້ອງຖິ່ນ

ພວກເຮົາຮ່ວມມືກັບຜູ້ໃຫ້ການຊ່ວຍເຫຼືອຂອງພວກເຮົາຢູ່ທົ່ວລັດ. ກະລຸນາເຂົ້າເບິ່ງ wahealthplanfinder.org ເພື່ອຊອກຫາຜູ້ໃຫ້ການຊ່ວຍເຫຼືອທີ່ຢູ່ໃນພື້ນທີ່ຂອງທ່ານ.